USAID | ASIA
FROM THE AMERICAN PEOPLE

RECOFTC
THE CENTER FOR PEOPLE AND FORESTS

# GREEN Mekong Program

## ແຜນງານສ້າງໂອກາດ ແລະ ເຄືອຂ່າຍທີ່ເຂັ້ມແຂງຢູ່ຂັ້ນຮາກຖານໃນເຂດແມ່ນ້ຳຂອງ

**ຄວາມເປັນມາ:** ໃນເຂດລຸ່ມແມ່ນ້ຳຂອງ ມີປ່າໄມ້ປົກຄຸມເກືອບເຄິ່ງຫນຶ່ງຂອງພື້ນທີ່ ຊຶ່ງສະໜອງຜົນປະໂຫຍດທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມແກ່ຊຸມຊົນທີ່ອີງອາໄສປ່າໄມ້ ໃນການດຳລົງຊີວິດ. ປ່າໄມ້ເຫລົ່ານີ້ ພວມຕົກຢູ່ໃນໄພຄຸກຄາມຈາກການບຸກເບີກທີ່ດິນ ເພື່ອຫລາຍຈຸດປະສົງ, ການຂຸດຄົ້ນໄມ້ ແລະ ການຫາອາຫານຈາກປ່າ ທີ່ບໍ່ມີຄວາມຍັ້ງຢືນ , ການພັດທະນາໂຄງລ່າງພື້ນຖານຂະໜາດໃຫຍ່, ໄຟປ່າ, ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ການປົກປັກຮັກສາປ່າໄມ້ ໄດ້ຮັບຄວາມສົນໃຈເພີ່ມຂຶ້ນຈາກທົ່ວໂລກ ເພາະເປັນວິທີທາງໄລຍະຍາວ ທີ່ບໍ່ສິ້ນເປືອງ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ. ແຕ່ການປົກປັກຮັກສາປ່າໄມ້ ໄດ້ຮັບຄວາມຫລົ້ມເຫລວ ເພາະບໍ່ໄດ້ຄຳນຶງເຖິງຄວາມຕ້ອງການ, ຄວາມປາຖະໜາ, ຄວາມອາດສາມາດ, ຄວາມຮູ້, ແລະ ການເຂົ້າຮ່ວມ ຂອງປະຊາຊົນທ້ອງຖິ່ນ ໃນເວລາຕັດສິນໃຈ ແລະ ຈັດຕັ້ງປະຕິບັດ. ໃນເຂດລຸ່ມແມ່ນ້ຳຂອງ ບ່ອນທີ່ຜູ້ຄົນນັບລ້ານຄົນ ຍັງອີງໃສ່ຊັບພະຍາກອນປ່າໄມ້ຢ່າງຫລວງຫລາຍ, ນະໂຍບາຍ ແລະ ຍຸດທະສາດ ທີ່ໄດ້ຖືກສ້າງຂຶ້ນເພື່ອປົກປັກຮັກສາປ່າໄມ້ ຫລຸດຜ່ອນການປ່ອຍອາຍກາກໂບນິກ ແລະ ຜ່ອນເບົາການປ່ຽນແປງດິນຟ້າອາກາດ ຈະປະສົບຜົນສຳເລັດໄດ້ ກໍຕໍ່ເມື່ອຊຸມຊົນໃນທ້ອງຖິ່ນ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ເທົ່ານັ້ນ.

**ພາບລວມ:** ແຜນງານສ້າງໂອກາດ ແລະ ເຄືອຂ່າຍທີ່ເຂັ້ມແຂງຢູ່ຂັ້ນຮາກຖານ ໃນເຂດແມ່ນ້ຳຂອງ (GREEN Mekong) ທີ່ໄດ້ຮັບການສະໜັບສະໜູນດ້ານທຶນຈາກອົງການເພື່ອການພັດທະນາຂອງປະເທດສະຫະລັດອາເມລິກາ (USAID) ເພື່ອຊ່ວຍສ້າງຄວາມສາມາດໃຫ້ແກ່ຜູ້ວາງນະໂຍບາຍ ແລະ ຜູ້ມີສ່ວນຮ່ວມຢູ່ຂັ້ນຮາກຖານ ໃນເຂດລຸ່ມແມ່ນ້ຳຂອງ ເພື່ອໃຫ້ຜູ້ທີ່ມີສ່ວນຮ່ວມ ໄດ້ເຂົ້າຮ່ວມ ໃນຂະບວນການ ໃນລະດັບປະເທດ ແລະ ພາກພື້ນ ກ່ຽວກັບການຜ່ອນເບົາການປ່ຽນແປງດິນຟ້າອາກາດ ໂດຍອີງໃສ່ປ່າໄມ້ເປັນຫລັກ ໄປຄຽງຄູ່ກັບການເສີມສ້າງການຮ່ວມມື, ການສົ່ງເສີມການແລກປ່ຽນຂໍ້ມູນຂ່າວສານ ແລະ ການສ້າງເຄືອຂ່າຍ ໃນລະດັບພາກພື້ນ.

**ວິທີທາງລະດັບພາກພື້ນ:** GREEN Mekong ນຳໃຊ້ວິທີທາງລະດັບພາກພື້ນ ໃນ ຂະບວນການສ້າງຄວາມອາດສາມາດ ການແລກປ່ຽນຂໍ້ມູນ ຂ່າວສານ ແລະ ການວາງນະໂຍບາຍຮ່ວມກັນພາຍໃນປະເທດແຖບລຸ່ມແມ່ນ້ຳຂອງ ເຊັ່ນ ກຳພູເຈັຍ , ສປປ ລາວ, ພະມ້າ, ໄທ, ແລະ ຫວຽດນາມ ໂດຍການ ຈັດງານດ້ານການຮຽນຮູ້ ແລະ ການຝຶກອົບຮົມໃນລະດັບພາກພື້ນ ລວມທັງ ສ້າງເວທີການເຈລະຈາປຶກສາຫາລື ແລະ ການ ຕິດຕໍ່ສື່ສານກ່ຽວກັບໂອກາດໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ.

**ຈຸດປະສົງ:** GREEN Mekong ຕັ້ງເປົ້າໝາຍເພື່ອເສີມສ້າງຄວາມອາດສາມາດ ໃຫ້ແກ່ຜູ້ວາງນະໂຍບາຍ ແລະ ຜູ້ມີສ່ວນຮ່ວມຢູ່ຂັ້ນຮາກຖານ ເພື່ອເສື່ອມສານ ແລະ ສົ່ງເສີມ ການເກີດໂອກາດໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ ໃນການສ້າງແຜນງານ , ການຮຽນຮູ້, ການເຈລະຈາປຶກສາຫາລືກ່ຽວກັບນະໂຍບາຍ ແລະ ການຈັດຕັ້ງປະຕິບັດຕົວຈິງ ໂດຍບັນດາສະຖາບັນ ໃນລະດັບຊາດ ແລະ ພາກພື້ນ, ບັນດາກິດຈະກຳທີ່ອອກແບບມາ ເພື່ອບັນລຸຈຸດປະສົງສະເພາະສາມຂໍ້ດັ່ງນີ້:

- ເສີມສ້າງຄວາມເຂັ້ມແຂງໃຫ້ຂະບວນການວາງນະໂຍບາຍ ທີ່ກ່ຽວພັນກັບການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ ໃນລະດັບຊາດ ແລະ ພາກພື້ນ ໂດຍລວມເອົາການການສ້າງໂອກາດເຂົ້ານຳ;
- ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການຈັດຕັ້ງທາງສັງຄົມ (CSOs) ເພື່ອສົ່ງເສີມໃຫ້ມີໂອກາດໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດທີ່ອີງໃສ່ປ່າໄມ້ເປັນຫລັກ; ແລະ
- ເພີ້ມທະວີຄວາມເຂົ້າໃຈຂອງຜູ້ມີສ່ວນຮ່ວມ ໃຫ້ຫລາຍຂຶ້ນ ກ່ຽວກັບໂອກາດ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ

**ໄລຍະເວລາ:** GREEN Mekong ໃຊ້ເວລາໃນການຈັດຕັ້ງປະຕິບັດ 3 ປີ (ເລີ້ມແຕ່ ເດືອນຕຸລາ 2012 - ເດືອນກັນຍາ 2015)







**GREEN Mekong ມີເປົ້າຫມາຍ ເພື່ອບັນລຸຜົນສໍາເລັດຫລັກດັ່ງຕໍ່ໄປນີ້**

- ຈັດເວທີປຶກສາຫາລືລະດັບຊາດດ້ານນະໂຍບາຍການຮຽນຮູ້ຂອງປະເທດ ຂຶ້ນໜຶ່ງຄັ້ງ ຊຶ່ງໃນນັ້ນ ທັດສະນະຂອງຜູ້ມີສ່ວນຮ່ວມຢູ່ຂັ້ນຮາກຖານ ຕໍ່ກັບໂອກາດ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ , ສາມາດໄດ້ຫຍິບຍົກມາສື່ສານ ແລກປ່ຽນ ປຶກສາຫາລື ແລະ ເຂົ້າໃຈ ໂດຍຜູ້ວາງນະໂຍບາຍ ໃນສາມປະເທດ ເປັນຢ່າງນ້ອຍ;
- ມີຄໍາແນະນໍາດ້ານນະໂຍບາຍ ຢ່າງຫນ້ອຍ 2 ຂໍ້ ເພື່ອແກ້ໄຂບັນຫາຂອງຂັ້ນຮາກຖານ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ ແລະ ທີ່ມີການພົວພັນສື່ສານໃນເວທີນະໂຍບາຍ ແລະ ເຄືອຂ່າຍ ພາກພື້ນອາຊ່ຽນ;
- ອົງການຈັດຕັ້ງທາງສັງຄົມ ຈໍານວນ 20 ອົງການ ຈາກຢ່າງຫນ້ອຍ 4 ປະເທດ ໄດ້ຮັບການຝຶກອົບຮົມ ກ່ຽວກັບ ໂອກາດ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ ແລະ ເອື້ອອໍານວຍຂໍ້ສະດວກ ໃນການປຶກສາຫາລື ຂອງຜູ້ມີສ່ວນຮ່ວມຢູ່ຂັ້ນຮາກຖານ;
- ອົງການຈັດຕັ້ງທາງສັງຄົມ ຈໍານວນ 10 ອົງການ ຈາກຢ່າງຫນ້ອຍ 4 ປະເທດ ໄດ້ຮັບການຊ່ວຍເຫລືອໃນການລວບລວມ, ວາງກອບ ແລະ ພົວພັນສື່ສານໂດຍກົງ ກ່ຽວກັບທັດສະນະຂອງຜູ້ມີສ່ວນຮ່ວມຢູ່ຂັ້ນຮາກຖານ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ;
- ມີຜູ້ຄົນຢ່າງຫນ້ອຍ 10,000 ຄົນ ສາມາດເຂົ້າເຖິງຂໍ້ມູນ ກ່ຽວກັບໂອກາດໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ;
- ເໜັ້ນສະເພາະໃສ່ການເຊື່ອມໂຍງເອົາບົດບາດຍິງຊາຍ ເຂົ້າໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ ໃຫ້ມີໂອກາດເທົ່າທຽມກັນຫລາຍຂຶ້ນ;
- ເຄືອຂ່າຍທີ່ເຂັ້ມແຂງໃນລະດັບຊາດ ແລະ ພາກ ພື້ນ ເພື່ອແລກປ່ຽນໝາກຜົນຂອງການທົດລອງ ແລະ ການປະຕິບັດທີ່ດີ ເລີດ ໃນການສົ່ງເສີມໃຫ້ມີໂອກາດ ໃນການຜ່ອນເບົາການປ່ຽນແປງດິນຟ້າອາກາດ ທີ່ອີງໃສ່ປ່າໄມ້ເປັນຫລັກ.

**ຕິດຕໍ່:**


GREEN Mekong Program
RECOFTC – The Center for People and Forests
P.O. Box 1111, Kasetsart Post Office,
Phahonyothin Road,
Bangkok 10903, Thailand.
Tel: +66 (0)2 940 5700 ext. 3242
Email: green.mekong@recoftc.org

ຫ້ອງການ RECOFTC ທີ່
ກົມປ່າໄມ້ ຖຸ້ມທາດດໍາ, ເມືອງຈັນທະບູລີ
ນະຄອນຫລວງວຽງຈັນ, ສປປ.ລາວ
ໂທ: +856 21 219 512
ອີເມວ: laos@recoftc.org


ສໍາລັບຂໍ້ມູນເພີ້ມເຕີມ ກະລຸນາຄົ້ນຫາໄດ້ຈາກເວບໄຊ: www.recoftc.org/site/resources/GREEN-Mekong/